ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******************************

ອົງການອະທິໄອຍະການ

ປະຊາຊົນ ແຫ່ງ ສປປລ

ເລກທີ 14 /ອອປ.

## ຄຳ ສັ່ງ ແນະ ນຳ

## ຂອງອະທິໄອຍະການປະຊາຊົນ

ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສ.ປ.ປ.ລາວ.

ອີງຕາມ ມະຕິຕົກລົງເລກທີ 07/ສພຊ ລົງວັນທີ 24 ກຸມພາ 1998 ວ່າດ້ວຍການ ເລືອກຕັ້ງ ອະທິໄອຍະການປະຊາຊົນ.

ເພື່ອປະຕິບັດໜ້າທີ່ວຽກງານ ຂອງລະບົບອົງການໄອຍະການປະຊາຊົນ ທີ່ກຳນົດໄວ້ຢູ່ໃນກົດໝາຍຂອງ ສ.ປ.ປ.ລາວ ໃຫ້ປະກົດຜົນເປັນຈິງ ແລະເພື່ອເປັນບ່ອນອີງໃຫ້ແກ່ການກຳນົດວິທີເຮັດວຽກ ແລະມາດຕະການສະກັດກັ້ນ ແລະຕ້ານວາດສະຍາກຳ ທີ່ເກີດຂຶ້ນໃນຂອບເຂດທົ່ວປະເທດ.

ອະທິໄອຍະການປະຊາຊົນ ຈິ່ງໄດ້ອອກຄຳສັ່ງແນະນຳເຖິງບັນດາອົງການໄອຍະການປະຊາຊົນແຂວງ, ກຳແພງນະຄອນ, ເມືອງ, ເຂດພິເສດ ແລະໄອຍະການທະຫານຂັ້ນສູງດັ່ງນີ້:

ມາດຕາ 1.-ໃຫ້ບັນດາອົງການໄອຍະການປະຊາຊົນ ແຕ່ລະເມືອງເກັບກຳຂໍ້ມູນວາດສະຍາກຳ ທີ່ເກີດຂຶ້ນຢູ່ພາຍໃນຂອບເຂດເມືອງຂອງຕົນ ໂດຍປະສານສົມທົບກັບອຳນາດການປົກຄອງແຕ່ລະບ້ານ ແລະອົງການສືບສວນ-ສອບສວນ ຂອງເມືອງເພື່ອສ້າງສະຖິຕິວາດສະຍາກຳປະຈຳແຕ່ລະອາທິດ ແຕ່ລະເດືອນ 3 ເດືອນ 6 ເດືອນ ແລະປີ ລາຍງານໃຫ້ຄະນະພັກ ອຳນາດການປົກຄອງເມືອງ ແລະສົ່ງບົດສະຫລຸບສະຖິຕິວາດສະຍາກຳປະຈຳເດືອນ ໃຫ້ແກ່ອົງການໄອຍະການປະຊາຊົນແຂວງ, ກຳແພງນະຄອນ ແລະເຂດພິເສດຢ່າງເປັນປະຈຳແຕ່ລະເດືອນ.

ມາດຕາ 2.-ໃຫ້ບັນດາອົງການໄອຍະການປະຊາຊົນແຂວງ, ກຳແພງນະຄອນ ແລະເຂດພິເສດຈົ່ງຊີ້ນຳ ແນະນຳ ແລະຊຸກຍູ້ບັນດາອົງການໄອຍະການປະຊາຊົນເມືອງ ໃນການຈັດຕັ້ງປະຕິບັດກົດໝາຍ ແລະວຽກງານ

..... 2

ເກັບກຳຂໍ້ມູນອາດຊະຍາກຳ ຂອງບັນດາອົງການໄອຍະການເມືອງສົ່ງມາໃຫ້ ແລະຈາກອົງການສືບສວນ-ສອບສວນ ຢູ່ແຂວງ, ກຳແພງນະຄອນ ແລະເຂດພິເສດແລ້ວສ້າງສະຖິຕິອາດຊະຍາກຳປະຈຳເດືອນ, ປະຈຳອາທິດ 3 ເດືອນ 6 ເດືອນ ແລະປີ ລາຍງານໃຫ້ຄະນະພັກ-ອຳນາດການປົກຄອງແຂວງ, ກຳແພງນະຄອນແລະເຂດພິເສດ ແລະສົ່ງບົດສະຫລຸບສະຖິຕິອາດຊະຍາກຳປະຈຳເດືອນໃຫ້ແກ່ອົງການອະທິໄອຍະການປະຊາຊົນຢ່າງເປັນປະຈຳແຕ່ລະເດືອນ.

<u>ມາດຕາ 3</u>: ໃຫ້ອົງການໄອຍະການທະຫານຂັ້ນສູງ ແນະນຳບັນດາໄອຍະການທະຫານກອງພົນ ກອງພັນໃຫຍ່, ແຂວງ, ກຳແພງນະຄອນ, ເຂດພິເສດ ແລະຂັ້ນທຽບເທົ່າຕ່າງໆເກັບກຳຂໍ້ມູນອາດຊະຍາກຳທີ່ເກີດຂຶ້ນໃນຂົງເຂດທົ່ວກອງທັບ ໂດຍການສ້າງສະຖິຕິອາດຊະຍາກຳປະຈຳເດືອນ 3 ເດືອນ 6 ເດືອນ ແລະ 1 ປີ ສົ່ງມາໃຫ້ອົງການອະທິໄອຍະການປະຊາຊົນ.

<u>ມາດຕາ 4</u>: ໃຫ້ແຕ່ລະພາກສ່ວນເກັບກຳຂໍ້ມູນອາດຊະຍາກຳ ຕາມເອກະສານແນະນຳຕິດຄັດມາພ້ອມນີ້ນັບແຕ່ໄດ້ຮັບຄຳສັ່ງສະບັບນີ້.

ໃນກໍລະນີມີບັນຫາຫຍຸ້ງຍາກສັບສົນໃຫ້ລາຍງານມາຍັງອົງການອະທິໄອຍະການປະຊາຊົນຊາບ.

<u>ມາດຕາ 5</u>: ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 20 / 8 /19

ອະທິໄອຍະການປະຊາຊົນ.

ຄຳປານ ພິລາວົງ